ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------:::::oOo:::::----------

ສານປະຊາຊົນສູງສຸດ

ເລກທີ..໔໒໗./ສປສສ

ນະຄອນຫຼວງວຽງຈັນ; ລົງວັນທີ....໒໔-໘-.....2010

## ຄຳແນະນຳ

## ຂອງປະທານສານປະຊາຊົນສູງສຸດ

ເຖິງ: ບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານ ສານປະຊາຊົນທ້ອງຖິ່ນ ໃນທົ່ວປະເທດ

ເລື່ອງ: ການພິຈາລະນາຄະດີ ກ່ຽວກັບໜີ້ສິນ ໃນກໍລະນີລູກໜີ້ຫາຍສາບສູນ ຫຼື ໄປຕ່າງປະເທດ

ອີງຕາມ ມາດຕາ 38 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009;

ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປັບປຸງ ປີ 2004;

ເພື່ອໃຫ້ມີຄວາມເປັນເອກະພາບ ໃນການຕີຄວາມໝາຍ, ການນຳໃຊ້ກົດໝາຍ ແລະ ກໍເພື່ອຮັບປະກັນ ການຮ້ອງຟ້ອງກໍ່ຄືບໍ່ເປັນການແກ່ຍາວ ການດຳເນີນຄະດີຂອງສານ.

ປະທານສານປະຊາຊົນສູງສຸດ ຈຶ່ງອອກຄຳແນະນຳ:

1. ເມື່ອມີການຮ້ອງຟ້ອງທວງເອົາໜີ້ສິນ ຫຼື ປະຕິບັດສັນຍາກູ້ຢືມມາຫາສານ ແຕ່ຈຳເລີຍໄດ້ເອົາຕົວຫຼົບໜີ ໂດຍບໍ່ຮູ້ບ່ອນຢູ່ ຫຼື ໄປຕ່າງປະເທດ, ຊຶ່ງຈຳເລີຍມີຊັບສິນບັດ ຢູ່ ສປປ ລາວ ໃຫ້ສານດຳເນີນຄະດີ ເປັນກໍລະນີພິເສດ ໂດຍບໍ່ມີຈຳເລີຍໃນຄະດີ, ຊຶ່ງຂັ້ນຕອນການດຳເນີນໃຫ້ປະຕິບັດຄື ໃຫ້ໂຈດເຮັດໜັງສືຢັ້ງຢືນ ຄວາມຖືກຕ້ອງຂອງຄຳຮ້ອງຟ້ອງ, ມີການເຊັນຢັ້ງຢືນຈາກພະຍານ ແລະ ອົງການປົກຄອງບ້ານ ພ້ອມປະກອບເອກະສານທັງໝົດ ໃຫ້ສານພິຈາລະນາ:

- ໃຫ້ຍາດພີ່ນ້ອງໃກ້ຊິດ(ພໍ່ແມ່, ອ້າຍ, ເອື້ອຍ, ນ້ອງ, ຜົວ ຫຼື ເມຍ, ລູກ) ຂອງພວກກ່ຽວມາໃຫ້ການຕໍ່ສານ.

- ພິຈາລະນາເອກະສານ ຂອງໂຈດຢ່າງຖືກຕ້ອງ.

2. ເມື່ອມີການຮ້ອງຟ້ອງເອົາໜີ້ສິນ ນຳບຸກຄົນທີ່ຫຼົບໜີ ຫຼື ຫາຍສາບສູນ ແຕ່ຜູ້ກ່ຽວຍັງມີຊັບສິນບັດຢູ່ນັ້ນ ຂັ້ນຕອນການດຳເນີນຄະດີ ໃຫ້ປະຕິບັດຄື:

- ສະເໜີຕໍ່ສານ ເພື່ອພິຈາລະນາວ່າຈຳເລີຍ ເປັນຜູ້ຫາຍສາບສູນກ່ອນ ຈຶ່ງດຳເນີນເລື່ອງໜີ້ສິນ.

- ຂັ້ນຕອນການດຳເນີນເລື່ອງໜີ້ສິນ ໃຫ້ປະຕິບັດຕາມຂັ້ນຕອນ ຂອງຂໍ້ທີ 1.

3. ຖ້າຈຳເລີຍຫາກໄປຕ່າງປະເທດ ໂດຍການຜ່ານສາຍການທູດນັ້ນ ໃຫ້ສະຖານທູດຂອງປະເທດນັ້ນ ປະຈຳລາວ ຫຼື ກົງສູນທີ່ກະຊວງການຕ່າງປະເທດ ຢັ້ງຢືນວ່າຈຳເລີຍໄປ ແຕ່ວັນທີເດືອນປີໃດ ຫາວັນທີເດືອນປີໃດ ຈຳເລີຍກັບຄືນປະເທດ;

- ຖ້າກຳນົດເວລາດັ່ງກ່າວ ຫາກຍັງບໍ່ໝົດຕາມກຳນົດເວລາປະຕິບັດສັນຍາ ທີ່ໂຈດ ແລະ ຈຳເລີຍ ໄດ້ມີສັນຍາໄວ້ນັ້ນ, ສານກໍໂຈະການດຳເນີນຄະດີດັ່ງກ່າວ ຈົນກວ່າຮອດກຳນົດຈຳເລີຍກັບມາຈາກຕ່າງປະເທດ;

- ຖ້າກຳນົດເວລາດັ່ງກ່າວ ຫາກກາຍກຳນົດເວລາປະຕິບັດສັນຍາ ທີ່ໂຈດ ແລະ ຈຳເລີຍ ໄດ້ມີສັນຍາໄວ້ນັ້ນ ສານກໍຈະພິຈາລະນາຕັດສິນ ຕາມການຮ້ອງຟ້ອງຂອງໂຈດເລີຍກໍ່ໄດ້ ໂດຍປະຕິບັດຕາມຂໍ້ 2 ທີ່ກ່າວມາຂ້າງເທິງ;

4. ເມື່ອຕັດສິນແລ້ວ ກໍໃຫ້ເອົາຄຳຕັດສິນລົງໜັງສືພິມ, ແຈ້ງໃຫ້ຍາດໃກ້ຊິດພ້ອມນາຍບ້ານບ່ອນຈຳເລີຍຢູ່ສຸດທ້າຍ ແລະ ກຳນົດເວລາ 3 ເດືອນ ຖ້າບໍ່ເຫັນໄປຮັບຊາບຄຳຕັດສິນນັ້ນ ຖືວ່າຄຳຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ສາມາດນຳສົ່ງໄປປະຕິບັດໄດ້.

5. ຖ້າພາຍໃນກຳນົດ 3 ເດືອນ ນັບແຕ່ມື້ໄດ້ສົ່ງຄຳຕັດສິນເປັນຕົ້ນໄປ, ຈຳເລີຍຫາກມາຮັບຊາບແລ້ວ ກໍໃຫ້ປະຕິບັດຕາມຂັ້ນຕອນ ຂອງການດຳເນີນຄະດີ;

ເມື່ອບັນດາຫົວໜ້າຄະນະສານ ຂອງສານປະຊາຊົນສູງສຸດ, ບັນດາປະທານສານປະຊາຊົນທ້ອງຖິ່ນທຸກຂັ້ນ ໄດ້ຮັບຄຳແນະນຳສະບັບນີ້ແລ້ວ ຈົ່ງນຳໄປເຜີຍແຜ່ ໃຫ້ບັນດາຜູ້ພິພາກສາ ແລະ ວິຊາການ ທີ່ຂຶ້ນກັບສິດອຳນາດຂອງຕົນ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ມີບັນຫາໃດຫຍຸ້ງຍາກ ໃຫ້ລາຍງານຄືນສານປະຊາຊົນສູງສຸດ ຄົ້ນຄວ້າພິຈາລະນາແກ້ໄຂ.

ປະທານສານປະຊາຊົນສູງສຸດ

ຄຳມີ ໄຊຍະວົງ

ບ່ອນສົ່ງ:
- ກຳມະທິການກົດໝາຍ ສະພາແຫ່ງຊາດ ເພື່ອຊາບ
- ໄອຍະການປະຊາຊົນສູງສຸດ 1 ສະບັບ (ເພື່ອກວດກາ)
- ກະຊວງຍຸຕິທຳ 1 ສະບັບ (ເພື່ອຊາບ)
- ບັນດາຄະນະສານປະຊາຊົນສູງສຸດ 1 ສະບັບ (ເພື່ອຊາບ)
- ບັນດາສານປະຊາຊົນແຂວງ, ນະຄອນຫຼວງ ແລະ ສານປະຊາຊົນເຂດ ບ່ອນລະ 1 ສະບັບ (ເພື່ອປະຕິບັດ)
- ສຳເນົາ 2 ສະບັບ